ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********✧********

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 03 /ຄຊກລ.ສຄ
ນະຄອນຫລວງວຽງຈັນ, ວັນທີ: 06 JAN 2017

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04, 2016

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04, 2016 ໄດ້ໄຂຂຶ້ນ ໃນວັນທີ 12 ເດືອນ ທັນວາ ປີ 2016, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນ ປະທານຂອງ ທ່ານ ບຸນພະນິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ, ຜູ້ຊີ້ນຳວຽກງານປະຕິບັດງານ ໂດຍມີ ຕົວແທນຈາກກະຊວງທີ່ກ່ຽວຂ້ອງອົງການປະຕິບັດງານ ແລະ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 14 ທ່ານ, ຍິງ: 4, ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິ ຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍ ຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດ ບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 04 ປີ 2016 ແລະ ແຜນຄາດຄະເນ ໃນໄຕມາດ 01 ປີ 2017 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຊຸກຍູ້ກະຊວງ ຖວທ ຈັດລາຍການວິ ທະຍຸ ເພື່ອໂຄສະນາຜົນຮ້າຍຂອງ ລບຕ ໃນ 5 ແຂວງ (ແຂວງຄຳມ່ວນ, ສາລະວັນ, ເຊກອງ,ຈຳປາສັກ ແລະ ນະ ຄອນຫຼວງວຽງຈັນ), ຈັດກອງປະຊຸມກຸ່ມວິຊາການ, ຈັດພິມເສື້ອຍືດ, ຕິດຕາມ ແລະ ປະເມີນຜູ້ຟັງໃນການຈັດລາຍ ການວິທະຍຸຢູ່ 5 ແຂວງ, ການໂຄສະນາສຸກເສີນ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳ ເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ 03 ເດືອນທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 01, ປີ 2017 ໃນນີ້ ໄດ້ມີ ທ່ານຜູ້ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ອົງການສາກົນເພື່ອຄົນພິ ການ (HI), ທ່ານຜູ້ຕາງໜ້າອົງການ WEL ໂຄງການ ສຶກສາເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ທ່ານຜູ້ຕາງໜ້າ ອົງການ DCA, ທ່ານຜູ້ຕາງໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງ ທ່ຽວ, ທ່ານຜູ້ຕາງໜ້າກົມອະນຸບານ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າກົມພາລະ ແລະ ສິລະປະ ກະ ຊວງສຶກສາທິການ ແລະ ກິລາ, ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 04, 2016 ແລະ ແຜນວຽກປະຈຳໄຕມາດ 01, 2017. ສ່ວນ ລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມ ດ້ວຍແຜນແມ່ນສາມາດເບິ່ງໄດ້ ໃນເອກະສານ ຊ້ອນທ້າຍ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

- ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫ້ອງການ ຄຊກລ ການລາຍງານກ່ຽວກັບອຸປະຕິເຫດຈາກບັນດາ ອົງການປະຕິບັດງານບາງຄັ້ງແມ່ນຊັກຊ້າຫຼາຍ, ສຳລັບສາເຫດການເກີດອຸປະຕິເຫດສ່ວນຫຼາຍແມ່ນຍ້ອນ

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

ການດັງໄຟ, ການມ້າງ, ການເອົາລູກລະເບີດມາໂຢນຫຼິ້ນ ເຮົາຈະເຮັດແນວໃດເພື່ອເພີ່ມການໂຄສະນາໃຫ້ທົ່ວເຖິງຄືຮູ້ກັນໃນປະຈຸບັນຜູ້ຖືກເຄາະຮ້າຍແມ່ນມີຕົວເລກສູງເຖິງ 53 ຄົນ (ສູງກວ່າປີຜ່ານມາ).

- ນອກນີ້ໜ່ວຍງານ VA ຍັງໄດ້ແຈ້ງອີກວ່າອົງການ WEL ໄດ້ມີກອງທຶນເພື່ອຊ່ວຍຜູ້ຖືກເຄາະຮ້າຍຢູ່ 6 ແຂວງ ແລະ ຢູ່ໃນໄລຍະສະເໜີລະບຽບການຊ່ວຍເຫຼືອ ເຊິ່ງໃນການຊ່ວຍເຫຼືອແມ່ນຊ່ວຍໃນການປິ່ນປົວ ແລະ ຖ້າກໍລະນີເສຍຊີວິດກໍ່ມີການຊົດເຊີຍ ສ່ວນລາຍລະອຽດຕ່າງໆພາຍຫຼັງອະນຸມັດເປັນທາງການແລ້ວຈະແຈ້ງໃຫ້ທຸກທ່ານຊາບຕາມພາຍຫຼັງ.

1. ກົມອະນຸບານ ກະຊວງສຶກສາທິການ ແລະ ກິລາ ຕິດຕາມຄູທີ່ໄປປະຕິບັດງານການສອນຢູ່ແຂວງຄໍາມ່ວນ. ຝຶກອົບຮົມແຊກຊ້ອນໃຫ້ສາຍຄູກ່ຽວກັບ ລບຕ.
- ຝຶກອົບຮົມລະຄອນຫຸ່ນກະຕາຢູ່ສະຫວັນນະເຂດ, ສ້າງລະຄອນຫຸ່ນກະຕາໃຫ້ຄູຝຶກ.
- ສະເໜີຫ້ອງການ ຄຊກລ ຈັດກອງປະຊຸມຖອດຖອນບົດຮຽນ, ມີສິ່ງທ້າທາຍຫຍັງ, ຊ່ອງຫວ່າງ ເພື່ອແລກປ່ຽນບົດຮຽນນໍາກັນ ຈະແກ້ໄຂແນວໃດ.
2. ກົມພາລະ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບອົງການນໍ້າໃຈນັກກິລາ (SOS) ຢູ່ໃນໄຕມາດ 4 ເຮັດກິດຈະກໍາຢູ່ແຂວງຊຽງຂວາງ ເປັນທຶນເພີ່ມບໍ່ໄດ້ລວມຢູ່ໃນ MOU ແລະ ໄດ້ຮັບການອະນຸມັດຈາກ ກະຊວງການຕ່າງປະເທດແລ້ວຈຶ່ງຈັດຕັ້ງປະຕິບັດກິດຈະກໍາ
3. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວວັດທະນະທໍາ ແລະ ທ່ອງທ່ຽວ ຜົນສໍາເລັດຂອງການເຄື່ອນໄຫວວຽກງານ ລບຕ 4 ແຂວງພາກໃຕ້ ສາລະວັນ, ເຊກອງ, ຄໍາມ່ວນ ແລະ ຈໍາປາສັກ.
- ສິ່ງທ້າທາຍ ແລະ ຂໍ້ສະເໜີ ເຂດທີ່ມີລະເບີດສ່ວນໃຫຍ່ເປັນເຂດທີ່ຫ່າງກັນສອກລີກຍາກທີ່ຈະເຂົ້າເຖິງຕ້ອງໃຊ້ງົບປະມານຫຼາຍ, ແຫຼ່ງຂໍ້ມູນມີໜ້ອຍ, ອຸປະກອນຮັບໃຊ້ເກົ່າແກ່ຊຸດໂຊມ ແລະ ມີຈໍາກັດ.
- ສະເໜີສະໜອງຂໍ້ມູນຂ່າວສານໃຫ້ຫຼາຍກວ່າເກົ່າ, ຂໍເພີ່ມງົບປະມານຂຶ້ນຕື່ມເພື່ອລົງເກັບຂໍ້ມູນສໍາພາດປະຊາຊົນເຂດເປົ້າໝາຍ.

4. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ວາງແຜນກິດຈະກໍາການເຄື່ອນໄຫວຢູ່ 9 ແຂວງ ແມ່ນໄດ້ 80% ຄາດວ່າໝົດປີນີ້ຈະສໍາເລັດ 100%. ມີແຜນຈະຈັດກອງປະຊຸມຖອດຖອນບົດຮຽນຂອງວຽກງານ RE ໄດ້ຈັດຕັ້ງປະຕິບັດແລ້ວໃນຮູບແບບລວມໃສ່ກັບກອງປະຊຸມປະຈໍາປີ.

5. ອົງການ DCA ການປະຕິບັດກິດຈະກໍາ ໃນໄຕມາດ 4 ປີ 2016 ພື້ນທີ່ເປົ້າໝາຍແມ່ນ ເມືອງແປກ ແລະ ເມືອງຄໍາ ແຂວງຊຽງຂວາງ ແລະ ເມືອງໃໝ່, ເມືອງຂວາ ແຂວງຜົ້ງສາລີ.
- ໃນບໍ່ດົນມານີ້ອົງການໄດ້ຈັດກອງປະຊຸມສະຫຼຸບວຽກງານ 1 ປີ ແລະ ສະຫຼຸບປິດທຶນ EU ປະຈຸບັນຢູ່ໃນໄລຍະກວດແກ້ບົດລາຍງານ.
6. ອົງການເວີລດ໌ເອດຢູ່ເຄຊັນ (WEL) ໄດ້ສະເໜີເຖິງກະຊວງສຶກສາ ແລະ ກິລາ ຮ່າງຄໍາສັ່ງຂອງນາຍຍົກນັ້ນແມ່ນຊັດເຈນຫຼາຍລະຫວ່າງຂໍ້ 1.2 ແລະ 1.3. ເດັກນ້ອຍແມ່ນໄດ້ຮັບຜົນກະທົບຫຼາຍການສຶກສາຍັງບໍ່ທົ່ວເຖິງ.
7. ອົງການ HI ເຮົາເຮັດວຽກຢູ່ສະຫວັນຢູ່ 4 ເມືອງ ຈັດຝຶກອົບຮົມໃຫ້ຄູຝຶກ, ສາຍຮູບເງົາໃຫ້ຊາວບ້ານ, ຕິດຕາມການຝຶກອົບຮົມຂອງຄູ ເຮົາກະກຽມຈະເຮັດເບີສາຍດ່ວນທຸກເມືອງໃຫ້ມີໝົດຖ້າກໍລະນີມີອຸປະຕິເຫດຈາກ ລບຕ ສາມາດລາຍງານໄດ້ເຫັນວ່າມີຄວາມສະດວກຂຶ້ນ, ນອກນີ້ອົງການ HI ຍັງມີຄວາມສົນໃຈກ່ຽວກັບການເລືອກແຂວງທີ່ຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ເຊິ່ງໃນນີ້ຫ້ອງການ ຄຊກລ ກໍ່ໄດ້ຊີ້ແຈງວ່າ: ຖ້າມີງົບປະມານພຽງພໍນັ້ນເຮົາກໍ່ຢາກເຮັດໃຫ້ທົ່ວເຖິງຂະຫຍາຍໄປຫຼາຍໆແຂວງ. ສໍາລັບການຈັດລາຍການວິທະຍຸນັ້ນເປັນພາສາລາວ, ສໍາລັບພາສາທ້ອງຖິ່ນນັ້ນເພິ່ນກະຢາກເຮັດ ແຕ່ອີງໃສ່ງົບປະມານ ແລະ ຈະໄດ້ປຶກສາກະຊວງຖະແຫຼງຂ່າວວັດທະນະທໍາ ແລະ ທ່ອງທ່ຽວ ອີກຄັ້ງໜຶ່ງ.

ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:

1. ຖ້າອົງການ HI ສົນໃຈເຮັດວິທະຍຸນັ້ນ, ເຮົາຕ້ອງໄດ້ປະຊຸມກັບ NRA, HI ກະຊວງຖະແຫຼງຂ່າວ (ເພາະວ່າວິທະຍຸນັ້ນແມ່ນມີຄວາມສຳຄັນຫຼາຍ ເວລາໄປໃຊໄປນາກໍ່ໄດ້ຟັງ)ເຫັນວ່າສາມາດເຂົ້າເຖິງກຸ່ມເປົ້າໝາຍໄດ້ດີ.
2. ສະເໜີທາງອົງການ DCA ຢາກໄດ້ບົດສະຫຼຸບທີ່ປິດໂຄງການເກົ່າທີ່ໃຊ້ທຶນ EU ຖ້າເປັນໄປໄດ້ຢາກໃຫ້ມີໂຕເລກເງິນແດ່.
3. ການສະເໜີຂອງກົມອະນຸບານແມ່ນເປັນການດີຈະເອົາໄປສະເໜີເຂົ້າກອງປະຊຸມ Board ແລະ ຢາກໃຫ້ບັນດາອົງການສຳຫຼວດພາຍໃນເຮົາເອງ.

**1. <u>ໝາຍເຫດ</u>:** ສຳລັບລາຍລະອຽດຂອງຜົນການເຄື່ອນໄຫວປະຕິບັດກິດຈະກຳ ແລະ ສະຖິຕິການເຄື່ອນໄຫວເຮັດວຽກໃນໄຕມາດ 04, 2016 ແລະ ແຜນວຽກໃນໄຕມາດ 01, 2017 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຄັດຕິດ.

| ປະທານກອງປະຊຸມ | ບັນທຶກກອງປະຊຸມໂດຍ: |
|---|---|
| ຫ້ອງການ ດຊກລ | |
| ບຸນພະມິດ ໂສມວິຈິດ | |
| Mr.Bounphamith SOMVICHITH | |